ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຂີຕີເອວ ນະຄອນ
ສະຫະກອນອອມຊັບ-ສິນເຊື່ອ
ເອົ້າ ເລກທີ 026 /ສອສ
ວັນທີ 14/12/16

ທະນາຄານແຫ່ງ ສປປ ລາວ

ກົມຄຸ້ມຄອງສະຖາບັນການເງິນ

ເລກທີ 554 /ກຄສງ

ນະຄອນຫລວງວຽງຈັນ, ວັນທີ 13 DEC 2016

## ແຈ້ງການ

ເຖິງ: ທ່ານ ຄະນະສະພາບໍລິຫານ ແລະ ຜູ້ອໍານວຍການ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ.

ເລື່ອງ: ການຢັ້ງຢືນຄວາມຖືກຕ້ອງການບັນຊີກ່ອນຈ່າຍເງິນປັນຜົນ ໃຫ້ແກ່ສະມາຊິກ.

- ອີງຕາມ ຂໍ້ກໍານົດ ວ່າດ້ວຍສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສະບັບເລກທີ 03/ທຫລ, ລົງວັນ 20 ມິຖຸນາ 2008.
- ອີງຕາມ ແຈ້ງການ ຂອງກົມຄຸ້ມຄອງສະຖາບັນການເງິນ ສະບັບເລກທີ 1711/ກຄສງ, ລົງວັນທີ 24 ທັນວາ 2013.

ທະນາຄານແຫ່ງ ສປປ ລາວ ກົມຄຸ້ມຄອງສະຖາບັນການເງິນ ຂໍຖືເປັນກຽດແຈ້ງມາຍັງບັນດາສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຊາບວ່າ: ເລີ່ມແຕ່ເດືອນ ມັງກອນ 2017 ເປັນຕົ້ນໄປ ຄະນະກວດກາກັບທີ່ ຈາກທະນາຄານແຫ່ງ ສປປ ລາວ ຈະໄດ້ລົງກວດກາການເຄື່ອນໄຫວດໍາເນີນງານ ຂອງສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ. ສະນັ້ນ, ເພື່ອຮັບປະກັນຂໍ້ມູນໃຫ້ແກ່ຄະນະກວດກາ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຕ້ອງໄດ້ກະກຽມບົດສະຫຼຸບລາຍງານການເຄື່ອນໄຫວທາງດ້ານການເງິນຂອງຕົນ ເພື່ອຢັ້ງຢືນຄວາມຖືກຕ້ອງ ທາງດ້ານບັນຊີ ກໍາໄລ - ຂາດທຶນ ແລະ ບໍ່ໃຫ້ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຈ່າຍເງິນປັນຜົນປະຈໍາປີ 2016 ໃຫ້ແກ່ສະມາຊິກ ກ່ອນໄດ້ຮັບການກວດກາ ຈາກຄະນະກວດກາ ຂອງກົມຄຸ້ມຄອງສະຖາບັນການເງິນ ຫຼື ຄະນະກວດກາ ຈາກ ທະນາຄານແຫ່ງ ສປປ ລາວ ປະຈໍາພາກ. ພາຍຫຼັງສໍາເລັດການກວດກາແລ້ວ ຈຶ່ງຈະອະນຸຍາດໃຫ້ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຈ່າຍເງິນປັນຜົນດັ່ງກ່າວໃຫ້ແກ່ບັນດາສະມາຊິກ ຕາມລະບຽບການ.

ກໍລະນີທີ່ ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ຫາກລະເມີດແຈ້ງການສະບັບນີ້ ທະນາຄານແຫ່ງ ສປປ ລາວ ຈະໃຊ້ມາດຕະການຕາມທີ່ໄດ້ກໍານົດໄວ້ ມາດຕາ 72 ຂອງຂໍ້ກໍານົດ ວ່າດ້ວຍສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ ສະບັບເລກທີ 03/ທຫລ, ລົງວັນ 20 ມິຖຸນາ 2008.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດຕາມແຈ້ງການສະບັບນີ້ຢ່າງເຂັ້ມງວດ.

ດ້ວຍຄວາມນັບຖື,

ຫົວໜ້າກົມຄຸ້ມຄອງສະຖາບັນການເງິນ

ດຣ. ອາລິນ ປະເຊີດ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຢອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@...